# ປວັດຫຍໍ້ ຂອງ ປາໄນ ຫລື ປາກຽນ ວີຣະວົງສ໌

**ຮຽບຮຽງ ໂດຍ ດວງເດືອນ ບຸນຍາວົງ**

**1. ກຳເນີດ : ປາໄນ** ແມ່ນນາມປາກກາຂອງ **ປາກຽນ ວີຣະວົງສ໌**, ລູກຊາຍຄົນທີສອງ ຂອງທ່ານມະຫາສີລາ ວີຣະວົງສ໌ ກັບນາງມາລີ, ເກີດທີ່ແຂວງໄຊຍະພູມ ເມືອງໄຊຍະພູມ ບ້ານສີລອງ ປະເທດສະຫຍາມເມື່ອປີ1942 ກົງກັບປີມະເມັຽພ.ສ.2474, ຂະນະທີ່ພໍ່ພາຄອບຄົວຫລົບຫນີໄພການເມືອງໄປອາໄສຢູ່ນຳແມ່ເກົ້າ(ບາງພັນ) ທີ່ຕັ້ງກິ່ນຖານຢູ່ທີ່ນັ້ນກ່ອນແລ້ວ. ມີເອື້ອຍນ້ອງຮ່ວມທ້ອງ ຕໍ່ໆມາອີກ12 ຄົນ (ໂຮມເປັນ14), ກ່ອນເກີດແມ່ໄດ້ນິມິດຝັນວ່າ ພະອິນ ເອົາແກ້ວສີດຳມາໃຫ້ພໍ່ທວາຍວ່າຈະໄດ້ລູກຊາຍຜູ່ມີຊື່ສຽງ

**2. ການສຶກສາ:** ອອກຈາກວິທະຍາໄລ ລີເຊປາວີ ວຽງຈັນ (Lycee de Pavie Vientiane) ຕັ້ງແຕ່ຮຽນຢູ່ມັດທະຍົມສາມ (ມໍ. 3, 1957) ເພາະຄວາມຂີ້ດື້ມັກຫລິ້ນຕິດທ່ຽວ ແລະຄຶດວ່າອາຈານສອນບໍ່ເກັ່ງພໍຈະສິດສອນຕົນແລະບໍ່ມີຄວາມອົດທົນນັ່ງຕັ່ງຟັງສຽງອາຈານຝຣັ່ງສ໌ ເວົ້າຫມິ່ນປມາດພາສາວັດທະນະທັມລາວໄດ້ ຈຶ່ງອອກຈາກໂຮງຮຽນ ໄປໃຊ້ຊີວິດຢູ່ໃນຊົນນະບົດນຳຄອບຄົວພໍ່ຮັກແມ່ຮັກ ບ້ານນາຄູນນ້ອຍ(ພໍ່ລຽງ ແມ່ລຽງ) ແລະບ້ານອື່ນໆ ແຕ່ບໍ່ດົນ ກໍຖືກຍາດພີ່ນ້ອງດຶງເອົາເຂົ້າເປັນທະຫານອາກາດ ແລະ ຮຽນວິທະຍຸການບິນແລ້ວສອບເສັງໄປຮຽນວິຊາວິທະຍຸການບິນທີ່ປະເທດຝຣັ່ງສ໌ ເມື່ອ ປີ 1958 ກັບຄືນມາປະເທດ 1961 ຂະນະທີ່ເຫດການບ້ານເມືອງພວມວຸ່ນວາຍ ແຕກເປັນຫລາຍພັກຫລາຍພວກ ພໍຍ່າງກ້າວລົງຈາກເຮືອບິນທີ່ເດີ່ນບິນດອນເມືອງປະເທດໄທປາກຽນ(ປາໄນ) ຖືກທາງການທະຫານ ຝ່າຍຂວາ(ນາຍພົນພູມີຫນໍ່ສະຫວັນ)ກັກໂຕໄວ້ແລະ ເອົາໄປປະຈຳການຢູ່ເດີ່ນເຮືອບິນເຊໂນສະຫວັນນະເຂດ. ດ້ວຍມີຄວາມຄຶດຕໍ່ຕ້ານສົງຄາມລະຫວ່າງລາວກັບລາວຢູ່ແລ້ວ ຈຶ່ງໄດ້ຫລົບຫນີຈາກຫນ້າທີ່ ແລະຖືກຕິດຕາມຈັບໂຕຢ່າງເອົາເປັນເອົາຕາຍ ຈຳເປັນໂຕນໄປຢູ່ນຳຝ່າຍເປັນກາງທີ່ວັງວຽງເຊິ່ງມີຮ້ອຍເອກກອງແລເປັນຜູ້ນຳ ໃນຂະນະນັ້ນ.

ເມື່ອ ຮ້ອຍໂທສົມຄິດ ວີຣະວົງສ໌ (ອ້າຍ ລູກຕິດແມ່) ເຊິ່ງເປັນທະຫານເປັນກາງ ຢູ່ກອງທັບຮັກສາການທົ່ງໄຫຫີນ ເສຽຊີວິດກາງທີ່ສະຫມໍລະພູມທົ່ງໄຫຫີນປີ1963 ປາກຽນ ຈຶ່ງໂຕນຫນຈາກວັງວຽງ ໄປຢູ່ຕ່າງປະເທດໄທລະຍະນຶ່ງຈົນຮອດ ປີ1967 ຈຶ່ງກັບຄືນມາບ້ານແລະປະກອບອາຊີບອິດສະລະເປັນຊາວສວນ ລ້ຽງໄກ່ແລະປູກຜັກລ້ຽງຄອບຄົວ ເວລານັ້ນ ແລະມີລູກສອງຄົນແລ້ວ. ເລີ່ມຂຽນຫນັງ ເລື່ອງສັ້ນບົດກະວີອອກຕາມຫນ້າຫນັງສືພິມ ວາລະສານລາຍເດືອນຕ່າງໆເຊັ່ນ ເພື່ອນແກ້ວ, ຂວັນເຮືອນ (ນິດຕະຍະສານ ລາຍເດືອນ ປະເພດ ບັນເທີງຄະດີ ແລະຫນັງສືພິມ...) ດ້ວຍປະສົບການປະສົມ ການຜະຈົນໄພທາງດ້ານການເມືອງເຫລົ່ານີ້ ປາໄນ ຈຶ່ງມີສາຍຕາແຫລມຄົມ ຕິດຕາມການປ່ຽນແປງຂອງການເມືອງສັງຄົມ ຜູ້ຄົນຢ່າງລະອຽດ ເລິກເຊິ່ງພໍສົມຄວນ. ການເຮັດໄຮ່ລ້ຽງໄກ່ບໍ່ປະສົບຄວາມສຳເລັດເທົ່າທີ່ຄວນ, ເພື່ອຫາລ້ຽງຄອບຄົວນ້ອຍໆຂອງຕົນ ປາໄນ ຈຶ່ງຫາເຮັດວຽກອື່ນຕື່ມ, ຕົ້ນຕໍແມ່ນຮັບແປເອກະສານບົດຄວາມເສດຖະກິດສັງຄົມການເມືອງສາສນາ ໃຫ້ແກ່ສຳນັກພິມໂນໂວສຕີ (Novosty press ໃບຂ່າວລາຍອາທິດຂອງອະດີດສະຫະພາບໂຊວຽດ, ລະຫວ່າງປີ 1970-74) ) ແລະອື່ນໆ ຈາກພາສາຝຣັ່ງສ໌ເປັນພາສາລາວແລະພະຄຳພີໄບເບີນລ໌ຂອງໂບດຄຣິຕສ໌ຕຽນເປັນພາສາລາວ, (ສ່ວນຫລາຍເອກະສານທີ່ພິມໃນຍຸກນີ້ບໍ່ມັກໃສ່ຊື່ຜູ້ແປຫລືຜູ້ຂຽນໄວ້ນຳດ້ວຍເຫດຜົນທາງການເມືອງແລະສ່ວນຕົວ) ດ້ວຍຄວາມມຸມານະເຮັດວຽກກັບພາສາຕ່າງປະເທດ(ພາສາຝຣັ່ງສ໌)ເຮັດໃຫ້ເຂົາເອງຕ້ອງຄົ້ນຄວ້າ ສຶກສາພາສາລາວພາສາໄທໄປພ້ອມໆ ດ້ວຍການອ່ານປຶ້ມຢ່າງຫລວງຫລາຍ. ໂຊກດີທີ່ເວລານັ້ນ ເຂົາຢູ່ເຮືອນກັບພໍ່(ມະຫາ ສີລາ ວີຣະວົງສ໌) ເຊິ່ງເປັນຜູ່ມີຄວາມຮູ້ເລິກເຊິ່ງທັງພາສາລາວໄທ ປາລີ ສັນສະກຣິດ ແລະ ສາສນາພຸດ.

ແມ່ນໃນລະຍະນີ້ເອງທີ່ ປາໄນໄດ້ຮ່ຳຮຽນຝືນປາຍປາກກາຂອງຕົນຮ່ວມກັບອາຈານຜູ່ຍິ່ງໃຫຍ່ ທີ່ເປັນບິດາຂອງຕົນເອງດັ່ງຈະປາກົດອອກໃນບົດກອນຂອງເຂົາເວລາຂຶ້ນຕົ້ນ ເລື່ອງ "ເຈົ້າກຸ່ນຫນອງດົນຈີ່" ວ່າ

### 3. ແຮກຕົ້ນການຂຽນ

ມາເຖິງປີ 1971 ເມື່ອຜູ້ເປັນເອື້ອຍຄື ດາຣາ ກັບລະຍາ ຫລື ດວງຈຳປາ ກັບມາແຕ່ຕ່າງປະທດ ທັງສອງຈຶ່ງຮ່ວມມືກັນຂຽນເລື່ອງສັ້ນຈັດພິມອອກເປັນເຫລັ້ມ ໂຮມໄດ້ 6 ຊຸດ ຄື 1/. " ກຸຍກິ່ນສາວ ຄາວຜູ້ຊາຍ" (1972) 2/."ທະເລຊີວິດ(1972)3/."ຫນາວໃຈ(1973)4/."ບໍ່ບານກໍຫອມ"(1973)5/. "ລືມສັນຍາ"(1974) ແລະ 6/."ຟ້າໃຫມ່"(1975) ໃນຂະນະດຽວກັນ ກໍອອກວາລະສານ"ໄຜ່ຫນາມ ລາຍເດືອນ" ແຕ່ 1972-75) ດ້ວຍທຶນຮອນຂອງສະມາຊິກໃນຄອບຄົວແລະ ການຮ່ວມມືຂອງນັກຂຽນອື່ນໆຫລາຍ ຄົນ(ເຊັ່ນ ອຸທິນ ບຸນຍາວົງ,ຈ. ອິນທຸພິລາດ,...) ປາໄນເປັນທັງຫົວກນ້າກອງບັນນທິການ ຮັບຜິດຊອບຂຽນ ປະຈຳຫລາຍບົດເຊັ່ນບົດບັນນາທິການ,ຍຸ້ມເປີ້ຍ(ໃຊ້ນາມປາກກາ ປ. ວີຣະວົງສ໌ , ປາໄນ , ວຽນຫຽນ...) ຕອບຈົດຫມາຍທ້າຍເຫລັ້ມກາບກອນເລື່ອງສັ້ນ ເລື່ອງຍາວ ລົງເປັນປະຈຳອີກບໍ່ຂາດຈັກສະບັບ ນັບແຕ່ມື້ອອກວາລະສານເຖິງສະບັບສຸດທ້າຍ ເດືອນຕຸລາ 1975, ໂຮມ 36 ສະບັບ). ໃນປີ 1975 ທີ່ມີການປົດປ່ອຍທົ່ວປະເທດ ປາໄນ ເຊິ່ງເປັນຄົນສະດຸ້ງໄວຕໍ່ທຸກສັບພະສຽງ ແລະຜ່ານມາກໍເປັນຜູ້ປາກກາຄາງຂຽນສຽດພຸ້ນຕຳພີ້ຕາມພາສານັກຂຽນສະທ້ອນສັງຄົມກ້າຂຽນຕິຊົມທຸກຝ່າຍການເມືອງ ຜູ້ສໍ້ລາດບັງຫລວງທຸກໆຫນ້າ ຈົນໄດ້ຮັບສົມຍານາມວ່າເປັນນັກຂຽນປາກກ້າ ເປັນແບບຢ່າງໃນການສະແດງທັດສະນະແບບເປີດເຜີຍ ໃຫ້ແກ່ວົງການອີດຂຽນຂອງລາວລະຍະນຶ່ງ. ໂດຍຄາດຄະເນເຫດການ ອັນຈະເກີດຂຶ້ນໄດ້ຕໍ່ຕົນເອງຢ່າງລັກແນ່ ຈຶ່ງຕັດສິນໃຈພາຄອບຄົວອົບພະຍົບໄປຢູ່ປະທດໄທ ເພາະເມຽເປັນຄົນມາແຕ່ພຸ້ນຢູ່ແລ້ວແລະໃນທີ່ສຸດກໍຍ້າຍໄປຢູ່ປະທດທີສາມຄື ອົດສະຕາລີແຕ່ປີ 1980 ປາຍ . ດ້ວຍຄວາມທີ່ເປັນຄົນ ມີຊື່ສຽງ ມີພອນສະຫວັນດ້ານການອີດຂຽນແຕ່ງກາບກອນຢູ່ແລ້ວ, ຫລາຍຄັ້ງເຂົາຈຶ່ງບາງກຸ່ມການເມືອງ(ເຊິ່ງເປັນອະດີດນັກ ການເມືອງລາວໃນຕ່າງແດນ ດຶງໂຕມາຫມຸນໃຊ້ໃຫ້ຂຽນບົດຄວາມບົດກະວີ ປະດັບຕາມຫນ້າວາລະສານທີ່ອອກມາ ເພື່ອຈຸດປະສົງທາງການເມືອງຂອງພວກເຂົາເທົ່ານັ້ນ ບໍ່ໄດ້ຂຽນອອກມາຈາກຫົວໃຈ ແລະຈິດສຳນຶກອັນແທ້ຈິງ ດັ່ງທີ່ເຄີຍຂຽນໃນສະໄຫມກ່ອນ. ດັ່ງນັ້ນຜົນງານໃນຫລັງໆມານີ້ ຄຸນຄ່າດ້ານສິລປະວັນນະສິນ ຫລື ສັງຄົມ ຈຶ່ງບໍ່ອາດທຽບເທົ່າກັບຜົນງານຊຸດເກົ່າໆໄດ້.

ຢ່າງໃດກໍດີ ເຖິງວ່າ ຊີວິດສ່ວນຕົວຂອງນັກຂຽນຄົນນີ້ (ເຊິ່ງກໍຄືກັບນັກຂຽນຜູ່ມີຊື່ສຽງຫລາຍຄົນໃນໂລກ)ໄດ້ຜ່ານເວທີຊີວິດອັນວົກວົນ ກືກມໍລະສຸມການເມືອງ ພັດພາພາກເຂົາໄປໄກຫ່າງ ໄກຈາກແຜ່ນດິນເກີດ ແຜ່ນດິນແມ່ ແຕ່ລະຍະນຶ່ງ ເຂົາໄດ້ເປັນຜູ້ແຕ້ມແຕ່ງສີສັນ ຕື່ມເຕີມລົດຊາດ ໃຫ້ແກ່ອຸທິຍານອັກສອນລາວ, ດ້ວຍສຳນວນໂວຫານ ຄຳເວົ້າທີ່ທັ່ງແທງອາລົມ ສະເທືອນຫົວໃຈ ໃຫ້ເປັ່ງທັງຮອຍຍິ້ມພ້ອມໆກັບບີບຄັ້ນຫົວໃຈອາລົມ ຈົນບໍ່ສາມາດກັ້ນເມັດນ້ຳຕາໄວ້ໄດ້ນັ້ນ ກໍໄດ້ຝາກຜົນງານ ອັນເປັນທີ່ຈົດຈຳຝັງໃຈຄວນແກ່ການສຶກສາໃນແງ່ການສ້າງໂຄງເລື່ອງໄດ້ຢ່າງຍອດຍ້ຽມ ມີລັກສະນະມາດຕະຖານສາກົນໃຊ້ພາສາໄດ້ຫລາກອາລົມ ຕ່ຳຫາສູງ ຢ່າງກົມກືນ ຄະຕິທັມເຈືອຈານຢູ່ທຸກບົດ ບໍ່ວ່າ ໃນບົດກະວີ ກວ່າ 50 ເລື່ອງ ແລະ ເລື່ອງສັ້ນ ກວ່າ 30 ເລື່ອງ ທີ່ພໍເກັບເກັບໄດ້ ເຊິ່ງຈັດໄວ້ໃນຕາລາງລຸ່ມນີ້ເພື່ອການສືບສານ.

ຄວາມຈິງແລ້ວ **ປາໄນ** ຂຽນກະວີ ເລື່ອງສັ້ນ ມາແຕ່ສະໄຫມປາຍຊຸມປີ 60 ພຸ້ນ ແຕ່ບໍ່ໄດ້ຮັກສາເກັບມ້ຽນ ປະກອບກັບຕ້ອງໂຍກຍ້າຍຫລົບພຸ້ນພີ້ເລື້ອຍໆ ເຮັດໃຫ້ ຜົນງານເຫລົ່ານັ້ນຕົກເຮ່ຣເສຽໄປເລີຍ ດັ່ງນັ້ນ ກ້າໃຜມີບົດກະວີທີ່ສົງໄສວ່າອາດເປັນຂອງ **ປາໄນ** ກະລຸນາສົ່ງມາໃຫ້ພວກເຮົາໄດ້ ເພາະພວກເຮົາຍັງຈົດຈຳບາງສຳນວນເນື້ອເລື່ອງໄດ້ຢູ່. ຂໍໃຫ້ຖືວ່າການສືບຫາ ຮ່ວມມືກັນແບບນີ້ ຈະຊ່ອຍໃຫ້ການ

| ລຳດັບ | ຊື່ເລື່ອງ | ບ່ອນພິມ / ພິມໃນ | ປີ | ໝາຍເຫດ |
|---|---|---|---|---|
| 01 | ຊ່າງເທາະ ເອົາເປັນຜູ້ຍິງ | ກຸຍກິ່ນສາວລາວຜູ້ຊາຍ | 1971 | ເລື່ອງສັ້ນ |
| 02 | ສາທຸ ຂໍໃຫ້ເພິ່ນກັບມາ | " " | " " | |
| 03 | ໂລກນີ້ບໍ່ຮູ | " " | " " | |
| 04 | ຊາດຄວາຍ | " " | " " | |
| 05 | ລ້ານລື່ນຄູ | " " | " " | |
| 06 | ນ້ຳຕາສາວແມ່ໝ້າຍ | " " | " " | |
| 07 | ໃສ່ຊື່ວ່າບັກໂອກເພື່ອເປັນ ອະນຸສອນ | ທະເລຊີວິດ | 1971 | |
| 08 | ລູກສາວຂ້ອຍເສັຽ | " " | " " | |
| 09 | ຄຶດຮອດ | " " | " " | |
| 10 | ຍັງບໍ່ແນ່ແທ້ດອກ | " " | " " | |
| 11 | ຫົງ | " " | " " | |
| 12 | ແດ່ ຈັນທອມ | " " | " " | |
| 13 | ຍ້ອນໃຜ | ໜາວໃຈ | 1971 | ເລື່ອງສັ້ນ |
| 14 | ຈ່າກະມີຫົວໃຈ | " " | " " | |
| 15 | ເຮື່ອງນີ້ ເພື່ອຍອດຊູ້ | " " | " " | |
| 16 | ບົດຮຽນແສນແສບ | " " | " " | |
| 17 | ຜາບຊີວິດ | ບໍ່ບານກໍຫອມ | 1972 | ເລື່ອງສັ້ນ |
| 18 | ຫົວລົມໜາວ | " " | " " | |
| 19 | ທິດຕາສູ້ຕາຍ | " " | " " | |
| 20 | ຂອບໃຈ | ລືມ ສັນຍາ | 1973 | |
| 21 | ໄປຕໍ່ໄກ່ | ໄຜ່ໜາມ | ສ.1/ 06 1972 | |
| 22 | ກວ່ານີ້ ມີອີກບໍ່ | ໄຜ່ໜາມ | ສ. 2/07 1972 | ເລື່ອງສັ້ນ |
| 22 | ຣາຄາຂອງພໍ່ | ໄຜ່ໜາມ | ສ. 5/10 1972 | |
| 23 | ເຮື່ອງນີ້ ຊຶ້ມາຊາວກິບ | ໄຜ່ໜາມ | ສ. 6/11 1972 | " " |
| 24 | ບາບບໍ່ແພ້ບຸນ | ໄຜ່ໜາມ | ສ. 7/12 1972 | " " |
| 25 | ໄປຫລອນລາບຈານເກົງ | ໄຜ່ໜາມ | ສ. 8/01 1973 | " " |
| 26 | ນ້ຳຕາແດ່ອີ່ໜີ | ໄຜ່ໜາມ | ສ. 9/10 197 | " " |
| 27 | ບອກແລ້ວບໍ່ເຊື່ອ | ໄຜ່ໜາມ | ສ.10/11 | |

| | | | | |
|---|---|---|---|---|
| | | | 1972 | |
| 28 | ໂຫດໃຜ | ໄຜ່ຫນາມ | ສ.12/01 1973 | " " |
| 29 | ລົມຊ່າ | ໄຜ່ຫນາມ | ສ.13/02 1973 | |
| 30 | ລູກກົກ | ໄຜ່ຫນາມ | ສ.14/03 1973 | " " |
| 31 | ບໍ່ຈຳເປັນ | ວາຣະສານ ນາງ | ສ.1/01 1972 | " " |
| 32 | ເສັຽດາຍ | ວາຣະສານ ນາງ | ສ.2/02 1972 | " " |
| 33 | ພື້ນແມ່ຍິງ ຢ່າໃຫ້ເວົ້າເທາະ | ວາລະສານ ນາງ | ສ.4/04 1972 | " " |
| 34 | ດົງຫມາກຣຽວ | ໄຜ່ຫນາມ | 1972- 1973 | ເລື່ອງຍາວ |
| 35 | ຂະບວນການສາງຣ່າ | | 1973- 1974 | ເລື່ອງຍາວ |
| | | | | |
| | | | | |

ປະເພດບົດກອນ ກໍຂຽນໄວ້ຊະຊາຍ ເທົ່າທີ່ເກັບກຳໄດ້ ແມ່ນແຕ່ບົດທີ່ພິມໄວ້ໃນ ວາຣະສານເພື່ອນແກ້ວ ແລະໄຜ່ຫນາມ ລະຫວ່າງ 1970-75

| | | | | |
|---|---|---|---|---|
| 01 | ທວາຍເທດສຳລັບ ປີຈໍ | ເພື່ອນແກ້ວ | ສ. ວ.ທ.15/04 1970 | |
| 02 | ສາຣະພັດຮ້ອນ | ເພື່ອນແກ້ວ | ສ. ວ.ທ. 30/04 1970 | |
| 03 | ໃຜວ່າ ວຽງຈັນທນ໌ (ຊິບໍ່)ເສົ້າ | ເພື່ອນແກ້ວ | ສ.ວ.ທ. 30/05 1970 | |
| 04 | ແດ່ ... ນັກສຶກສາຍິງລາວ ທີ່ບາງກອກ | ເພື່ອນແກ້ວ | ສ.ວ.ທ. 30/06 1970 | |
| 05 | ບັນຫາອັກສອນລາວ ຈະກາຍເປັນໂຣກຊຳເຮື້ອ | ເພື່ອນແກ້ວ | ສ.ວ.ທ.15/07 1970 | |
| 06 | ການຮຽນພິມດີດ ກັບອັງກິດ ນັ້ນຫລື ຄອງສິງ? | ເພື່ອນແກ້ວ | ສ.ວ.ທ.15/08 1970 | |
| 07 | "ທອນ" ຂີ້ດິນດາກ | ເພື່ອນແກ້ວ | ສ.ວ.ທ. 30 /08 1970 | |
| 08 | ອັນເນື່ອງມາຈາກການເຄື່ອນໄຫວ ຂອງຊາວພຸດ ບ້ານ ຕົ້ນເຜີ້ງ | ເພື່ອນແກ້ວ | ສ.ວ.ທ. 15/09 1970 | |
| 09 | ບ້ຽວ(ຕລອດຣາຍການ) | ເພື່ອນແກ້ວ | ສ.ວ.ທ.15/10 1970 | |
| 10 | ການເຊື້ອເຣືອຊ່ວງພັທນາ | ເພື່ອນແກ້ວ | ສ.ວ.ທ.15/10 1970 | |
| 11 | ກະກຶບໃນທາງທີ່ກຶກແທ້ | ເພື່ອນແກ້ວ | ສ.ວ.ທ. 30/10 1970 | |
| 12 | ຮຽມວອນ | ເພື່ອນແກ້ວ | ສ.ວ.ທ.15/11 1970 | |
| 13 | ແນວຄຶດ | ເພື່ອນແກ້ວ | ສ.ວ.ທ.15/12 1970 | |
| 14 | ເນົ່າບໍ່ຕາຍ ເນົ່າໃນ | ເພື່ອນແກ້ວ | ສ.ວ.ທ. 30/12 1970 | |
| 15 | ຫູຫນວກກິນຟານ | ເພື່ອນແກ້ວ | ສ.ວ.ທ. 15/01 1971 | |
| 16 | ທວາຍເທດ ປີກຸນ | ເພື່ອນແກ້ວ | ສ.ວ.ທ.15/04 1971 | |

24/VII

| | | | | |
|---|---|---|---|---|
| 17 | ວ່າ... ຜູ່ແທນຊຸດກ່ອນພຸ້ນດອກ | ເພື່ອນແກ້ວ | ສ.ວ.ທ.15/05 1971 | |
| 18 | ໂຄງການກອບໂກຍ | ເພື່ອນແກ້ວ | ສ.ວ.ທ.30/05 1971 | |
| 19 | ຝົນເດືອນຫົກ | ເພື່ອນແກ້ວ | 1971 | |
| 20 | ເຈົ້າກຸ່ິບໜອງດິບຈີ່ | ກະວີຊາວບ້ານ | ໂຮມລຳກອນ 1972 | |
| 21 | ບັກກີລາຂາຂາວ | ກະວີຊາວບ້ານ | ໂຮມລຳກອນ 1972 | |
| 22 | ມ້າບັກລາຍຕາຍຄາຕົມ | ກະວີຊາວບ້ານ | ໂຮມລຳກອນ 1972 | |
| 23 | ໂລກ ກັບໂຣຄ ສະແລນແຕນ | ກະວີຊາວບ້ານ | ໂຮມລຳກອນ 1972 | |
| 24 | ຊັງ | ກະວີຊາວບ້ານ | ໂຮມລຳກອນ 1972 | |
| 25 | ສຳນຽງບອກພາສາ ວາຈາບອກຕຣະກູນ... ? | ກະວີຊາວບ້ານ | ໂຮມລຳກອນ 1972 | |
| 27 | ໝາຈອກເທົ່າຊ້າງ | ກະວີຊາວບ້ານ | ໂຮມລຳກອນ 1972 | |
| 28 | ຜູ່ແທນກ່ອນເລືອກ | ກະວີຊາວບ້ານ | ໂຮມລຳກອນ 1972 | |
| 29 | ເຣື່ອງຂອງສົງຄ໌(ຊື່ງອາດຈະ) ທົງສີລ(ຢູ່ແດ່ )<br>(ຢູ່ແດ່ ) | ກະວີຊາວບ້ານ | ໂຮມລຳກອນ 1971 | |
| 30 | ຫວາຍເທດ ປີຊວາດ | ໄຜ່ໜາມ | ສ.1/06 1972 | |
| 31 | ກ້າອ້າຍກຣວ | ໄຜ່ໜາມ | ສ.1/06 1972 | |
| 32 | ແລ້ວເທາະ ເສິກເອີ້ຍ ! | ໄຜ່ໜາມ | ສ. 2/07 1972 | |
| 33 | ສາວກາງບາ | ໄຜ່ໜາມ | ສ. 4/09 1972 | |
| 34 | ດ້າມພ້າຂໍ ກັບຕໍໄຜ່ | ໄຜ່ໜາມ | ສ. 4/09 1972 | |
| 35 | ໂລກ 1972 | ໄຜ່ໜາມ | ສ. 5/10 1972 | |

| | | | | |
|---|---|---|---|---|
| 36 | ອິກເພີ່ນອິກໂຕ | ໄຜ່ຫນາມ | ສ. 6/11 1972 | |
| 37 | ພະເຈດີມິ່ງເມືອງ | ໄຜ່ຫນາມ | ສ. 7/12 1972 | |
| 38 | ບ່າວວຽງຈັນຝາກຊີວິດ | ໄຜ່ຫນາມ | ສ. 7/12 1972 | |
| 39 | ສັນຕິພາບໃນຝັນ | ໄຜ່ຫນາມ | ສ. 8/01 1973 | |
| 40 | ປີ້ແຫລະສົງຄາມ | ໄຜ່ຫນາມ | ສ.13/06 1973 | |
| 41 | ຟື້ນຄົ້ນເກົ່າ | ໄຜ່ຫນາມ | ສ.14/07 1973 | " |
| 42 | ນ້ຳແຫ້ງເຫັນຕໍ | ໄຜ່ຫນາມ | ສ.19/12 1973 | |
| 43 | ທວາຍເຫດປີຂານ | ໄຜ່ຫນາມ | ສ. 23/04 1974 | |
| 44 | ຣາຄາມັນແພງ | ໄຜ່ຫນາມ | ສ. 29/10 1974 | |
| 45 | ຟ້າໃຫມ່ | ອັກສອນສິລປ໌ | ເຫລັ້ມ 1 1974 | |
| 46 | ບາງ | ວາຣະສານ ບາງ | ສ. 1/ 1972 | |
| | | | | |
| | | | | |
| | | | | |